ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 25674 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 20 ກັນຍາ2024

# ຂໍ້ຕົກລົງ
# ວ່າດ້ວຍ ການປະມູນເລກປ້າຍທະບຽນຍານພາຫະນະທາງບົກ

- ອີງຕາມ ກົດໝາຍວ່າດ້ວຍຍານພາຫະນະທາງບົກ ສະບັບເລກທີ 04/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍກອງທຶນທາງ ສະບັບເລກທີ 130/ລບ, ລົງວັນທີ 01 ມິຖຸນາ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີຂອງກົມຂົນສົ່ງ ສະບັບເລກທີ 22770/ກຂສ, ລົງວັນທີ 23 ສິງຫາ 2024.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ເພື່ອໃຫ້ການປະມູນດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການປະມູນເລກປ້າຍທະບຽນຍານພາຫະນະທາງບົກ

ການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ແມ່ນ ການແຂ່ງຂັນເອົາລາຄາສູງສຸດ ຈາກລາຄາກາງທີ່ກຳນົດຂອງເລກປ້າຍທະບຽນຍານພາຫະນະທາງບົກ ໃນຂໍ້ຕົກລົງສະບັບນີ້ ທີ່ ບຸກຄົນ ແລະ ນິຕິບຸກຄົນຕ້ອງການໄດ້ສິດໃນການຄອບຄອງ ແລະ ນຳໃຊ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ປ້າຍທະບຽນຍານພາຫະນະທາງບົກ** ໝາຍເຖິງ ແຜ່ນປ້າຍທີ່ປະກອບດ້ວຍ ລະຫັດ ຕົວອັກສອນ, ຕົວເລກ ແລະ ເຄື່ອງໝາຍ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດ ແລະ ອະນຸຍາດອອກໃຫ້;

2. **ເລກສີ່ຕົວຄືກັນ** ໝາຍເຖິງ ເລກປ້າຍທະບຽນຍານພາຫະນະທາງບົກ ທີ່ມີຕົວເລກ ສີ່ຕົວຄືກັນ;

3. **ເລກລຽງສີ່ຕົວ** ໝາຍເຖິງ ເລກປ້າຍທະບຽນຍານພາຫະນະທາງບົກ ທີ່ມີຕົວເລກ ສີ່ຕົວລຽງກັນ;

4. **ເລກຄູ່ຄືກັນ** ໝາຍເຖິງ ເລກປ້າຍທະບຽນຍານພາຫະນະທາງບົກ ທີ່ມີຕົວເລກ ທາງເບື້ອງຊ້າຍຄູ່ກັນ ແລະ ທາງເບື້ອງຂວາຄູ່ກັນ;

5. **ເລກຄູ່ຫາມກັນ** ໝາຍເຖິງ ເລກປ້າຍທະບຽນຍານພາຫະນະທາງບົກ ທີ່ມີຕົວເລກ ສີ່ຕົວ ຊຶ່ງມີຕົວເລກດ້ານຊ້າຍສຸດ ແລະ ດ້ານຂວາສຸດ ເປັນຕົວເລກດຽວກັນ ແລະ ຕົວເລກທາງກາງເປັນເລກຄູ່;

6. **ເລກຄູ່ສະຫຼັບກັນ** ໝາຍເຖິງ ເລກປ້າຍທະບຽນຍານພາຫະນະທາງບົກ ທີ່ມີຕົວເລກລຳດັບທີໜຶ່ງຄືກັບຕົວເລກລຳດັບທີສາມ ແລະ ຕົວເລກລຳດັບທີສອງຄືກັບຕົວເລກລຳດັບທີສີ່;

7. **ເລກສາມຕົວຫຼັງຄືກັນ** ໝາຍເຖິງ ເລກປ້າຍທະບຽນຍານພາຫະນະທາງບົກ ທີ່ມີຕົວເລກ ເບື້ອງຊ້າຍເປັນຕົວເລກດ່ຽວ ແລະ ລົງທ້າຍຕົວເລກສາມຕົວຄືກັນ;

8. **ເລກຫຼັກພັນ** ໝາຍເຖິງ ເລກປ້າຍທະບຽນຍານພາຫະນະທາງບົກ ທີ່ມີຕົວເລກ ສາມຕົວເລກລົງທ້າຍເປັນເລກສູນ.

**ມາດຕາ 4 ຫຼັກການກ່ຽວກັບການປະມູນເລກປ້າຍທະບຽນຍານພາຫະນະທາງບົກ**

ການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ຮັບປະກັນການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ມີຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ປະເພດ ລົດຈັກ ແລະ ລົດເບົາ.

ຂໍ້ຕົກລົງສະບັບນີ້ ບໍ່ກວມເອົາ ເລກປ້າຍທະບຽນຍານພາຫະນະທາງບົກ ປະເພດປ້າຍ ບໍລິຫານຂອງລັດ, ຊົ່ວຄາວ, ອົງການຈັດຕັ້ງສາກົນ ແລະ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

## ໝວດທີ 2
## ປ້າຍທະບຽນຍານພາຫະນະທາງບົກ ແລະ ເງື່ອນໄຂການປະມູນ

**ມາດຕາ 6 ປະເພດປ້າຍທະບຽນຍານພາຫະນະທາງບົກ ສຳລັບການປະມູນ**

ປ້າຍທະບຽນຍານພາຫະນະທາງບົກ ປະເພດ ລົດຈັກ ແລະ ລົດເບົາ ສຳລັບການປະມູນ ມີ ສາມ ປະເພດ ດັ່ງນີ້:

1. ເອກະຊົນລາວ;
2. ເອກະຊົນຕ່າງດ້າວ;
3. ທຸລະກິດ ຮ້ອຍສ່ວນຮ້ອຍ 100%.

**ມາດຕາ 7 ວິທີການປະມູນເລກປ້າຍທະບຽນຍານພາຫະນະທາງບົກ**

ການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ໃຫ້ດຳເນີນດ້ວຍວິທີການປະມູນເປີດກວ້າງແບບເຊິ່ງໜ້າ ແລະ ເຂົ້າຮ່ວມການປະມູນແບບທາງໄກ (Video Conference) ໂດຍຄະນະກຳມະການຈັດຕັ້ງການປະມູນ ແລະ ຜູ້ເຂົ້າຮ່ວມການປະມູນ.

**ມາດຕາ 8 ເລກປ້າຍທະບຽນຍານພາຫະນະທາງບົກ ສຳລັບການປະມູນ**

ເລກປ້າຍທະບຽນຍານພາຫະນະທາງບົກ ສຳລັບການປະມູນ ມີດັ່ງນີ້:

1. ເລກສີ່ຕົວຄືກັນ;
2. ເລກລຽງສີ່ຕົວ;
3. ເລກຄູ່ຄືກັນ;
4. ເລກຄູ່ຫາມກັນ;
5. ເລກຄູ່ສະຫຼັບກັນ;
6. ເລກສາມຕົວຫຼັງຄືກັນ;
7. ເລກຫຼັກພັນ.

ສຳລັບເລກປ້າຍທະບຽນຍານພາຫະນະທາງບົກ ປະເພດລົດຈັກ ຈະປະມູນສະເພາະແຕ່ ເລກສີ່ຕົວຄືກັນ.

ລາຍລະອຽດກ່ຽວກັບຈຳນວນເລກປ້າຍທະບຽນຍານພາຫະນະທາງບົກແຕ່ລະປະເພດ ທີ່ກຳນົດເຂົ້າໃນການປະມູນ ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 1 ແລະ 2.

**ມາດຕາ 9 ເງື່ອນໄຂການປະມູນເລກປ້າຍທະບຽນຍານພາຫະນະທາງບົກ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ຕ້ອງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ຕ້ອງມີເງື່ອນໄຂດັ່ງນີ້:

1. ເປັນພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຜູ້ທີ່ມີໃບທະບຽນວິສາຫະກິດຖືກຕ້ອງ ຢູ່ ສປປ ລາວ;
2. ມີ ສຳມະໂນຄົວ ຫຼື ບັດປະຈຳຕົວ ຫຼື ໃບທະບຽນວິສາຫະກິດ ຢັ້ງຢືນ;
3. ມີເງິນສົດວາງຄ້ຳປະກັນ ກ່ອນເຂົ້າຮ່ວມການປະມູນໃນມູນຄ່າ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 3
## ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ

**ມາດຕາ 10 ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ**

ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ແມ່ນ ການຈັດຕັ້ງທີ່ຮັບຜິດຊອບໃນການຈັດການປະມູນຕົວຈິງ ຊຶ່ງຖືກແຕ່ງຕັ້ງ ໂດຍລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ຕາມການສະເໜີຂອງຫົວໜ້າກົມຂົນສົ່ງ.

ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ປະກອບດ້ວຍ:

1. ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຫົວໜ້າຄະນະ;
2. ຮອງຫົວໜ້າກອງບັນຊາປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນຮອງຫົວໜ້າຄະນະ;
3. ຫົວໜ້າຂະແໜງຂົນສົ່ງທາງບົກພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຄະນະ;

4. ຫົວໜ້າຂະແໜງຈັດຕັ້ງ-ບໍລິຫານ ແລະ ກວດກາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຄະນະ;

5. ຫົວໜ້າກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຄະນະ.

ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ສາມາດແຕ່ງຕັ້ງກອງເລຂາຊ່ວຍວຽກ ເພື່ອຈັດຕັ້ງການປະມູນ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ**

ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມເອກະສານທີ່ກ່ຽວຂ້ອງ ທີ່ຈະນຳໃຊ້ໃນການປະມູນ;
2. ອອກແຈ້ງການໃຫ້ບຸກຄົນ, ນິຕິບຸກຄົນ ທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມແຂ່ງຂັນການປະມູນ ແລະ ຊຳລະເງິນຄ່າເລກປ້າຍທະບຽນຍານພາຫະນະທາງບົກ ທີ່ຕົນປະມູນໄດ້;
3. ສ້າງແຜນການເຄື່ອນໄຫວ ແລະ ແຜນງົບປະມານ ໃນການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ເພື່ອຂໍອະນຸມັດຈາກຂັ້ນເທິງ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ;
5. ຈັດຕັ້ງ ແລະ ດຳເນີນການປະມູນຕົວຈິງ;
6. ຮັບເງິນທີ່ໄດ້ຈາກການປະມູນ;
7. ມອບເງິນທີ່ໄດ້ຮັບຈາກການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ທຸກຄັ້ງ;
8. ເກັບກຳ ແລະ ສັງລວມຜົນການປະມູນ;
9. ສະຫຼຸບ ແລະ ລາຍງານກ່ຽວກັບການຈັດຕັ້ງການປະມູນ ໃຫ້ກົມຂົນສົ່ງ ທຸກຄັ້ງ ພາຍຫຼັງສຳເລັດການປະມູນ.

## ໝວດທີ 4
## ການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ

**ມາດຕາ 12 ການຂໍອະນຸຍາດຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ**

ການປະມູນແຕ່ລະຄັ້ງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຕ້ອງສັງລວມຈຳນວນເລກປ້າຍທະບຽນຍານພາຫະນະທາງບົກທີ່ຈະປະມູນ ແລ້ວຂໍອະນຸຍາດດຳເນີນການຈັດຕັ້ງການປະມູນນຳກົມຂົນສົ່ງ ເພື່ອພິຈາລະນາ.

ສຳລັບເລກປ້າຍທະບຽນຍານພາຫະນະທາງບົກທີ່ຈະປະມູນ ໃຫ້ລຽງໄປຕາມລຳດັບຕົວອັກສອນລາວ ທີ່ຍັງບໍ່ທັນໄດ້ຂຶ້ນທະບຽນຍານພາຫະນະທາງບົກ ແຕ່ລະປະເພດ ໂດຍບໍ່ໃຫ້ຂ້າມລຳດັບຕົວອັກສອນ ໄປຕາມຄວາມຕ້ອງການຂອງຜູ້ຊົມໃຊ້.

**ມາດຕາ 13 ການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ**

ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ເປັນຜູ້ຮັບຜິດຊອບດຳເນີນການປະມູນຕົວຈິງ ດ້ວຍການນຳສະເໜີລະບຽບການກ່ຽວກັບການປະມູນ, ແຈ້ງປະເພດ ແລະ ເລກປ້າຍ

ທະບຽນຍານພາຫະນະທາງບົກ ທີ່ນຳມາປະມູນ, ສະເໜີລາຄາເລີ່ມຕົ້ນ (ເຄາະໄມ້) ຈາກນັ້ນໃຫ້ນັບແຕ່ 1 ຫາ 3 ແລະ ກຳນົດເອົາລາຄາສູງສຸດທີ່ຜູ້ເຂົ້າຮ່ວມປະມູນ ໄດ້ສະເໜີລາຄາສຸດທ້າຍ ແລະ ໃຫ້ຖືວ່າຜູ້ສະເໜີລາຄາສຸດທ້າຍເປັນຜູ້ຊະນະການປະມູນ.

**ມາດຕາ 14 ການຊຳລະເງິນ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຊະນະການປະມູນ ຕ້ອງຊຳລະເງິນຄ່າເລກປ້າຍທະບຽນຍານພາຫະນະທາງບົກ ພາຍໃນ 10 ວັນ ພາຍຫຼັງວັນທີ່ສຳເລັດການປະມູນ, ຖ້າກາຍກຳນົດໄລຍະເວລາດັ່ງກ່າວ ຖືວ່າສະຫຼະສິດ ແລະ ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ຕ້ອງນຳເອົາເລກປ້າຍທະບຽນຍານພາຫະນະທາງບົກດັ່ງກ່າວ ສະເໜີກົມຂົນສົ່ງຄືນໃໝ່ ເພື່ອນຳໄປປະມູນໃນຄັ້ງຕໍ່ໄປ ສ່ວນເງິນສົດທີ່ຜູ້ຊະນະການປະມູນວາງຄ້ຳປະກັນນັ້ນ ຈະບໍ່ສົ່ງຄືນ ແລະ ຕົກເປັນຂອງລັດ ໂດຍມອບເຂົ້າເປັນລາຍຮັບການປະມູນເລກປ້າຍ. ສຳລັບຜູ້ທີ່ບໍ່ຊະນະການປະມູນ ຄະນະກຳມະການປະມູນ ຕ້ອງສົ່ງເງິນວາງຄ້ຳປະກັນການປະມູນໃຫ້ພວກກ່ຽວ ພາຍໃນ 3 ວັນ ນັບແຕ່ວັນສຳເລັດການປະມູນ.

## ໝວດທີ 5
## ສິດ ແລະ ພັນທະ ຂອງຜູ້ຊະນະການປະມູນ

**ມາດຕາ 15 ສິດຂອງຜູ້ຊະນະການປະມູນ**

ຜູ້ຊະນະການປະມູນ ມີ ສິດ ດັ່ງນີ້:

1. ນຳເອົາເລກປ້າຍທະບຽນຍານພາຫະນະທາງບົກທີ່ຕົນປະມູນ ຂຶ້ນທະບຽນໄດ້ທັນທີ ໂດຍບໍ່ລໍຖ້າຂຶ້ນຕາມລຳດັບເລກທະບຽນ ແລະ ສາມາດນຳເອົາເລກປ້າຍທະບຽນຍານພາຫະນະທາງບົກທີ່ຕົນປະມູນໄດ້ ປ່ຽນແທນເລກປ້າຍທະບຽນຍານພາຫະນະທາງບົກ ທີ່ຕົນເອງໄດ້ຂຶ້ນທະບຽນແລ້ວ;
2. ເລກປ້າຍທະບຽນຍານພາຫະນະທາງບົກທີ່ປະມູນໄດ້ ສາມາດຂຶ້ນທະບຽນຖືກຕ້ອງຕາມລະບຽບການ, ໂອນກຳມະສິດໃຫ້ແກ່ ລູກ, ຍາດຕິພີ່ນ້ອງ ແລະ ບຸກຄົນອື່ນ ຕາມກົດໝາຍ;
3. ຮ້ອງທຸກຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ເມື່ອເຫັນວ່າຕົນໄດ້ຮັບຄວາມອັບປະໂຫຍດ;
4. ມີສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 16 ພັນທະຂອງຜູ້ຊະນະການປະມູນ**

ຜູ້ຊະນະການປະມູນ ມີ ພັນທະ ດັ່ງນີ້:

1. ຊຳລະເງິນຄ່າເລກປ້າຍທະບຽນຍານພາຫະນະທາງບົກ ໃຫ້ຄະນະກຳມະການຈັດຕັ້ງການປະມູນເລກປ້າຍທະບຽນຍານພາຫະນະທາງບົກ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;
2. ຕ້ອງນຳເລກປ້າຍທະບຽນຍານພາຫະນະທາງບົກທີ່ຕົນປະມູນໄດ້ ໄປຂຶ້ນທະບຽນໃນໄລຍະເວລາບໍ່ເກີນ 6 ເດືອນ ຖ້າກາຍກຳນົດຖືວ່າສະຫຼະສິດ, ເລກປ້າຍທະບຽນຍານພາຫະນະທາງບົກດັ່ງກ່າວ ຈະຖືກນຳໄປປະມູນໃນຄັ້ງຕໍ່ໄປ. ສ່ວນເງິນທີ່ໄດ້ຊຳລະຄ່າເລກປ້າຍທະບຽນຍານພາຫະນະທາງບົກ ຈະບໍ່ສົ່ງຄືນ ແລະ ຕົກເປັນຂອງລັດ ໂດຍມອບເຂົ້າເປັນລາຍຮັບການປະມູນເລກປ້າຍ;
3. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການຂຶ້ນທະບຽນປ້າຍຍານພາຫະນະທາງບົກ;
4. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

## ໝວດທີ 6
## ເງິນທີ່ໄດ້ຮັບຈາກການປະມູນ

**ມາດຕາ 17 ເງິນທີ່ໄດ້ຮັບຈາກການປະມູນ**

ເງິນທີ່ໄດ້ຮັບຈາກການປະມູນ ໃຫ້ຈັດແບ່ງ ດັ່ງນີ້:

1. ສາມສິບສ່ວນຮ້ອຍ 30% ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ນໍາໃຊ້ເຂົ້າໃນວຽກງານຈັດການປະມູນເລກປ້າຍທະບຽນຍານພາຫະນະທາງບົກ;

2. ເຈັດສິບສ່ວນຮ້ອຍ 70% ມອບເຂົ້າກອງທຶນທາງ.

**ມາດຕາ 18 ການຄຸ້ມຄອງ ແລະ ນໍາໃຊ້ເງິນທີ່ໄດ້ຮັບຈາກການປະມູນ**

ການຄຸ້ມຄອງ ແລະ ນໍາໃຊ້ເງິນທີ່ໄດ້ຮັບຈາກການປະມູນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 19 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ພົວພັນທຸກຮູບແບບ, ເຂົ້າຮ່ວມ ແລະ ໃຫ້ການຊ່ວຍເຫຼືອແກ່ຜູ້ເຂົ້າຮ່ວມໃນການປະມູນ, ເປັນສື່ກາງ, ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

2. ສົມຮູ້ຮ່ວມຄິດໃນການປະມູນ ເພື່ອຊະນະການປະມູນ;

3. ປົດບັງ, ຊຸກເຊື່ອງ, ກົດໜ່ວງຖ່ວງດຶງ ຫຼື ຂັດຂວາງ ການຈັດຕັ້ງປະຕິບັດວຽກງານຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

4. ນໍາເອົາເລກປ້າຍທະບຽນຍານພາຫະນະທາງບົກທີ່ປະມູນໄດ້ ໄປເປັນຫຼັກຊັບຄໍ້າປະກັນ;

5. ຜະລິດປ້າຍທະບຽນຍານພາຫະນະທາງບົກ ທີ່ບຸກຄົນ ແລະ ນິຕິບຸກຄົນປະມູນໄດ້ ມາໄວ້ຄອບຄອງ ກ່ອນໄລຍະເວລາຂຶ້ນທະບຽນຍານພາຫະນະ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 20 ຂໍ້ຫ້າມສໍາລັບຜູ້ປະມູນ ແລະ ຜູ້ເຂົ້າຮ່ວມໃນການປະມູນ**

ຫ້າມ ຜູ້ປະມູນ ແລະ ຜູ້ເຂົ້າຮ່ວມໃນການປະມູນ ມີ ພຶດຕິກໍາ ດັ່ງນີ້:

1. ເຮັດໃຫ້ຜູ້ເຂົ້າຮ່ວມການປະມູນ ມີຄວາມເຂົ້າໃຈຜິດ ຕໍ່ຄຸນລັກສະນະ ແລະ ຄຸນນະພາບ ຂອງປ້າຍທະບຽນຍານພາຫະນະທາງບົກ;

2. ໃຫ້ສິນບົນ ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອຜົນປະໂຫຍດຂອງຕົນ;

3. ແອບອ້າງຜົນງານ ຫຼື ຊື່ສຽງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 21 ຂໍ້ຫ້າມ ສໍາລັບ ຄະນະກໍາມະການປະມູນ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ຄະນະກໍາມະການປະມູນ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ແລະ ຕໍາແໜ່ງ ບັງຄັບນາບຂູ່ ເພື່ອຜົນປະໂຫຍດຂອງຕົນ;
2. ຂໍເອົາ, ທວງເອົາ ຫຼື ຮັບສິນບົນ;
3. ເມີນເສີຍຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ຫຼື ກົດໜ່ວງຖ່ວງດຶງ ເອກະສານ;
4. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບກ່ຽວກັບການປະມູນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ລໍາອຽງ ແລະ ຈັດຕັ້ງການປະມູນ ໂດຍບໍ່ມີຄວາມຍຸຕິທໍາ ແລະ ໂປ່ງໃສ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຂົນສົ່ງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນຢ່າງດີ.

ບັນດາກົມ, ຫ້ອງການກະຊວງ, ສະຖາບັນ, ກອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ພະຈິກ 2024 ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງ ລັດຖະການ ເປັນຕົ້ນໄປ.

**ລັດຖະມົນຕີ**

ງາມປະສົງ ເມືອງມະນີ

ເອກະສານຊ້ອນທ້າຍ 1

ຂອງຂໍ້ຕົກລົງ ວ່າດ້ວຍ ການປະມູນເລກປ້າຍທະບຽນຍານພາຫະນະທາງບົກ

ປະເພດລົດຈັກ

1. ປ້າຍເອກະຊົນລາວ

| ລ/ດ | ເລກປ້າຍທະບຽນຍານພາຫະນະທາງບົກ | ລາຄາ ຄ້ຳປະກັນ ກ່ອນເຂົ້າຮ່ວມການປະມູນ | ລາຄາປະມູນເລີ່ມຕົ້ນຕໍ່ໜຶ່ງເລກປ້າຍທະບຽນ |
|---|---|---|---|
| 1 | - ເລກສີ່ຕົວຄືກັນ: 1111, 2222, 3333, 4444 | 1,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 10,000,000 ກີບ |
| | - ເລກສີ່ຕົວຄືກັນ: 5555, 6666, 7777 | 2,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 20,000,000 ກີບ |
| | - ເລກສີ່ຕົວຄືກັນ: 8888, 9999 | 3,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 30,000,000 ກີບ |

2. ປ້າຍເອກະຊົນຕ່າງດ້າວ

| ລ/ດ | ເລກປ້າຍທະບຽນຍານພາຫະນະທາງບົກ | ລາຄາ ຄ້ຳປະກັນ ກ່ອນເຂົ້າຮ່ວມການປະມູນ | ລາຄາເລີ່ມຕົ້ນຕໍ່ໜຶ່ງເລກປ້າຍທະບຽນ |
|---|---|---|---|
| 2 | - ເລກສີ່ຕົວຄືກັນ: 1111, 2222, 3333, 4444 | 800,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 8,000,000 ກີບ |
| | - ເລກສີ່ຕົວຄືກັນ: 5555, 6666, 7777 | 1,800,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 18,000,000 ກີບ |
| | - ເລກສີ່ຕົວຄືກັນ: 8888, 9999 | 2,800,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 28,000,000 ກີບ |

3. **ປ້າຍທຸລະກິດ ຮ້ອຍສ່ວນຮ້ອຍ 100%**

| ລ/ດ | ເລກປ້າຍທະບຽນຍານພາຫະນະທາງບົກ | ລາຄາ<br>ຄ້ຳປະກັນ ກ່ອນເຂົ້າ<br>ຮ່ວມການປະມູນ | ລາຄາເລີ່ມຕົ້ນຕໍ່ໜຶ່ງ<br>ເລກປ້າຍທະບຽນ |
|---|---|---|---|
| 3 | - ເລກສີ່ຕົວຄືກັນ:<br>1111, 2222, 3333, 4444 | 600,000 ກີບ ຕໍ່<br>ໜຶ່ງ ເລກປ້າຍທະບຽນ | 6,000,000 ກີບ |
| | - ເລກສີ່ຕົວຄືກັນ:<br>5555, 6666, 7777 | 1,600,000 ກີບ ຕໍ່<br>ໜຶ່ງ ເລກປ້າຍທະບຽນ | 16,000,000 ກີບ |
| | - ເລກສີ່ຕົວຄືກັນ:<br>8888, 9999 | 2,600,000 ກີບ ຕໍ່<br>ໜຶ່ງ ເລກປ້າຍທະບຽນ | 26,000,000 ກີບ |

ເອກະສານຊ້ອນທ້າຍ 2

ຂອງຂໍ້ຕົກລົງ ວ່າດ້ວຍ ການປະມູນເລກປ້າຍທະບຽນຍານພາຫະນະທາງບົກ

ປະເພດລົດເບົາ

## 1. ປ້າຍເອກະຊົນລາວ

| ລ/ດ | ເລກປ້າຍທະບຽນຍານພາຫະນະທາງບົກ | ລາຄາ ຄໍ້າປະກັນ ກ່ອນເຂົ້າຮ່ວມການປະມູນ | ລາຄາປະມູນເລີ່ມຕົ້ນ ຕໍ່ໜຶ່ງເລກປ້າຍທະບຽນ |
|---|---|---|---|
| 1 | ▪ ເລກສີ່ຕົວຄືກັນ:<br>1111, 2222, 3333, 4444 | 5,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 50,000,000 ກີບ |
| | ▪ ເລກສີ່ຕົວຄືກັນ:<br>5555, 6666, 7777 | 8,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 80,000,000 ກີບ |
| | ▪ ເລກສີ່ຕົວຄືກັນ:<br>8888, 9999 | 15,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 150,000,000 ກີບ |
| 2 | ▪ ເລກລຽງສີ່ຕົວ:<br>1234, 2345, 3456, 4567, 5678, 6789 | 2,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 20,000,000 ກີບ |
| 3 | ▪ ເລກຄູ່ຄືກັນ:<br>- 0011, 0022, 0033, 0044, 0055, 0066, 0077, 0088, 0099<br>- 1100, 1122, 1133, 1144, 1155, 1166, 1177, 1188, 1199<br>- 2200, 2211, 2233, 2244, 2255, 2266, 2277, 2288, 2299<br>- 3300, 3311, 3322, 3344, 3355, 3366, 3377, 3388, 3399<br>- 4400, 4411, 4422, 4433, 4455, 4466, 4477, 4488, 4499<br>- 5500, 5511, 5522, 5533, 5544, 5566, 5577, 5588, 5599<br>- 6600, 6611, 6622, 6633, 6644, 6655, 6677, 6688, 6699<br>- 7700, 7711, 7722, 7733, 7744, 7755, 7766, 7788, 7799<br>- 8800, 8811, 8822, 8833, 8844, 8855, 8866, 8877, 8899<br>- 9900, 9911, 9922, 9933, 9944, 9955, 9966, 9977, 9988 | 3,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 30,000,000 ກີບ |
| 4 | ▪ ເລກຄູ່ຫາມກັນ<br>- 1001, 1221, 1331, 1441, 1551, 1661, 1771, 1881, 1991<br>- 2002, 2112, 2332, 2442, 2552, 2662, 2772, 2882, 2992<br>- 3003, 3113, 3223, 3443, 3553, 3663, 3773, 3883, 3993<br>- 4004, 4114, 4224, 4334, 4554, 4664, 4774, 4884, 4994 | 2,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 20,000,000 ກີບ |

| | | | |
|---|---|---|---|
| | - 5005, 5115, 5225, 5335, 5445, 5665, 5775, 5885, 5995<br>- 6006, 6116, 6226, 6336, 6446, 6556, 6776, 6886, 6996<br>- 7007, 7117, 7227, 7337, 7447, 7557, 7667, 7887, 7997<br>- 8008, 8118, 8228, 8338, 8448, 8558, 8668, 8778, 8998<br>- 9009, 9119, 9229, 9339, 9449, 9559, 9669, 9779, 9889 | | |
| 5 | ▪ ເລກຄູ່ສະຫຼັບກັນ:<br>- 1010, 1212, 1313, 1414, 1515, 1616, 1717, 1818, 1919<br>- 2020, 2121, 2323, 2424, 2525, 2626, 2727, 2828, 2929<br>- 3030, 3131, 3232, 3434, 3535, 3636, 3737, 3838, 3939<br>- 4040, 4141, 4242, 4343, 4545, 4646, 4747, 4848, 4949<br>- 5050, 5151, 5252, 5353, 5454, 5656, 5757, 5858, 5959<br>- 6060, 6161, 6262, 6363, 6464, 6565, 6767, 6868, 6969<br>- 7070, 7171, 7272, 7373, 7474, 7575, 7676, 7878, 7979<br>- 8080, 8181, 8282, 8383, 8484, 8585, 8686, 8787, 8989<br>- 9090, 9191, 9292, 9393, 9494, 9595, 9696, 9797, 9898 | 2,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 20,000,000 ກີບ |
| 6 | ▪ ເລກສາມຕົວຫຼັງຄືກັນ:<br>- 1222, 1333, 1444, 1555, 1666, 1555, 1888, 1999<br>- 2111, 2333, 2444, 2555, 2666, 2777, 2888, 2999<br>- 3111, 3222, 3444, 3555, 3666, 3777, 3888, 3999<br>- 4111, 4222, 4333, 4555, 4666, 4777, 4888, 4999<br>- 5111, 5222, 5333, 5444, 5666, 5777, 5888, 5999<br>- 6111, 6222, 6333, 6444, 6555, 6777, 6888, 6999<br>- 7111, 7222, 7333, 7444, 7555, 7666, 7888, 7999<br>- 8111, 8222, 8333, 8444, 8555, 8666, 8777, 8999<br>- 9111, 9222, 9333, 9444, 9555, 9666, 9777, 9888 | 3,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 30,000,000 ກີບ |
| 7 | ▪ ເລກຫຼັກພັນ:<br>1000, 2000, 3000, 4000, 5000, 6000, 7000, 8000, 9000 | 3,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 30,000,000 ກີບ |

**2. ປ້າຍເອກະຊົນຕ່າງດ້າວ**

| ລ/ດ | ເລກປ້າຍທະບຽນຍານພາຫະນະທາງບົກ | ລາຄາ ຄ້ຳປະກັນ ກ່ອນເຂົ້າຮ່ວມການປະມູນ | ລາຄາເລີ່ມຕົ້ນຕໍ່ໜຶ່ງ ເລກປ້າຍທະບຽນ |
|---|---|---|---|
| 1 | ▪ ເລກສີ່ຕົວຄືກັນ:<br>1111, 2222, 3333, 4444 | 3,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 30,000,000 ກີບ |

| | | | |
|---|---|---|---|
| | ▪ ເລກສີ່ຕົວຄືກັນ:<br>5555, 6666, 7777 | 5,000,000 ກີບ<br>ຕໍ່ໜຶ່ງ ເລກປ້າຍ<br>ທະບຽນ | 50,000,000 ກີບ |
| | ▪ ເລກສີ່ຕົວຄືກັນ:<br>8888, 9999 | 10,000,000 ກີບ<br>ຕໍ່ໜຶ່ງ ເລກປ້າຍ<br>ທະບຽນ | 100,000,000 ກີບ |
| 2 | ▪ ເລກລຽງສີ່ຕົວ:<br>1234, 2345, 3456, 4567, 5678, 6789 | 1,500,000 ກີບ<br>ຕໍ່ໜຶ່ງ ເລກປ້າຍ<br>ທະບຽນ | 15,000,000 ກີບ |
| 3 | ▪ ເລກຄູ່ຄືກັນ:<br>- 0011, 0022, 0033, 0044, 0055, 0066, 0077, 0088, 0099<br>- 1100, 1122, 1133, 1144, 1155, 1166, 1177, 1188, 1199<br>- 2200, 2211, 2233, 2244, 2255, 2266, 2277, 2288, 2299<br>- 3300, 3311, 3322, 3344, 3355, 3366, 3377, 3388, 3399<br>- 4400, 4411, 4422, 4433, 4455, 4466, 4477, 4488, 4499<br>- 5500, 5511, 5522, 5533, 5544, 5566, 5577, 5588, 5599<br>- 6600, 6611, 6622, 6633, 6644, 6655, 6677, 6688, 6699<br>- 7700, 7711, 7722, 7733, 7744, 7755, 7766, 7788, 7799<br>- 8800, 8811, 8822, 8833, 8844, 8855, 8866, 8877, 8899<br>- 9900, 9911, 9922, 9933, 9944, 9955, 9966, 9977, 9988 | 1,500,000 ກີບ<br>ຕໍ່ໜຶ່ງ ເລກປ້າຍ<br>ທະບຽນ | 15,000,000 ກີບ |
| 4 | ▪ ເລກຄູ່ທາມກັນ<br>- 1001, 1221, 1331, 1441, 1551, 1661, 1771, 1881, 1991<br>- 2002, 2112, 2332, 2442, 2552, 2662, 2772, 2882, 2992<br>- 3003, 3113, 3223, 3443, 3553, 3663, 3773, 3883, 3993<br>- 4004, 4114, 4224, 4334, 4554, 4664, 4774, 4884, 4994<br>- 5005, 5115, 5225, 5335, 5445, 5665, 5775, 5885, 5995<br>- 6006, 6116, 6226, 6336, 6446, 6556, 6776, 6886, 6996<br>- 7007, 7117, 7227, 7337, 7447, 7557, 7667, 7887, 7997<br>- 8008, 8118, 8228, 8338, 8448, 8558, 8668, 8778, 8998<br>- 9009, 9119, 9229, 9339, 9449, 9559, 9669, 9779, 9889 | 1,000,000 ກີບ<br>ຕໍ່ໜຶ່ງ ເລກປ້າຍ<br>ທະບຽນ | 10,000,000 ກີບ |
| 5 | ▪ ເລກຄູ່ສະຫຼັບກັນ<br>- 1010, 1212, 1313, 1414, 1515, 1616, 1717, 1818, 1919<br>- 2020, 2121, 2323, 2424, 2525, 2626, 2727, 2828, 2929<br>- 3030, 3131, 3232, 3434, 3535, 3636, 3737, 3838, 3939<br>- 4040, 4141, 4242, 4343, 4545, 4646, 4747, 4848, 4949<br>- 5050, 5151, 5252, 5353, 5454, 5656, 5757, 5858, 5959 | 1,000,000 ກີບ<br>ຕໍ່ໜຶ່ງ ເລກປ້າຍ<br>ທະບຽນ | 10,000,000 ກີບ |

| | | | |
|---|---|---|---|
| | - 6060, 6161, 6262, 6363, 6464, 6565, 6767, 6868, 6969<br>- 7070, 7171, 7272, 7373, 7474, 7575, 7676, 7878, 7979<br>- 8080, 8181, 8282, 8383, 8484, 8585, 8686, 8787, 8989<br>- 9090, 9191, 9292, 9393, 9494, 9595, 9696, 9797, 9898 | | |
| 6 | ▪ ເລກສາມຕົວຫຼັງຄືກັນ<br>- 1222, 1333, 1444, 1555, 1666, 1555, 1888, 1999<br>- 2111, 2333, 2444, 2555, 2666, 2777, 2888, 2999<br>- 3111, 3222, 3444, 3555, 3666, 3777, 3888, 3999<br>- 4111, 4222, 4333, 4555, 4666, 4777, 4888, 4999<br>- 5111, 5222, 5333, 5444, 5666, 5777, 5888, 5999<br>- 6111, 6222, 6333, 6444, 6555, 6777, 6888, 6999<br>- 7111, 7222, 7333, 7444, 7555, 7666, 7888, 7999<br>- 8111, 8222, 8333, 8444, 8555, 8666, 8777, 8999<br>- 9111, 9222, 9333, 9444, 9555, 9666, 9777, 9888 | 2,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 20,000,000 ກີບ |
| 7 | ▪ ເລກຫຼັກພັນ<br>1000, 2000, 3000, 4000, 5000, 6000, 7000, 8000, 9000 | 1,500,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 15,000,000 ກີບ |

**3. ປ້າຍທຸລະກິດ ຮ້ອຍສ່ວນຮ້ອຍ 100%**

| ລ/ດ | ເລກປ້າຍທະບຽນຍານພາຫະນະທາງບົກ | ລາຄາ ຄ້ຳປະກັນ ກ່ອນເຂົ້າ ຮ່ວມການປະມູນ | ລາຄາເລີ່ມຕົ້ນຕໍ່ໜຶ່ງ ເລກປ້າຍທະບຽນ |
|---|---|---|---|
| 1 | ▪ ເລກສີ່ຕົວຄືກັນ:<br>1111, 2222, 3333, 4444 | 4,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 40,000,000 ກີບ |
| | ▪ ເລກສີ່ຕົວຄືກັນ:<br>5555, 6666, 7777 | 7,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 70,000,000 ກີບ |
| | ▪ ເລກສີ່ຕົວຄືກັນ:<br>8888, 9999 | 10,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 100,000,000 ກີບ |
| 2 | ▪ ເລກລຽງສີ່ຕົວ:<br>1234, 2345, 3456, 4567, 5678, 6789 | 2,000,000 ກີບ ຕໍ່ໜຶ່ງ ເລກປ້າຍ ທະບຽນ | 20,000,000 ກີບ |

| | | | |
|---|---|---|---|
| 3 | ▪ ເລກຄູ່ຄືກັນ:<br>- 0011, 0022, 0033, 0044, 0055, 0066, 0077, 0088, 0099<br>- 1100, 1122, 1133, 1144, 1155, 1166, 1177, 1188, 1199<br>- 2200, 2211, 2233, 2244, 2255, 2266, 2277, 2288, 2299<br>- 3300, 3311, 3322, 3344, 3355, 3366, 3377, 3388, 3399<br>- 4400, 4411, 4422, 4433, 4455, 4466, 4477, 4488, 4499<br>- 5500, 5511, 5522, 5533, 5544, 5566, 5577, 5588, 5599<br>- 6600, 6611, 6622, 6633, 6644, 6655, 6677, 6688, 6699<br>- 7700, 7711, 7722, 7733, 7744, 7755, 7766, 7788, 7799<br>- 8800, 8811, 8822, 8833, 8844, 8855, 8866, 8877, 8899<br>- 9900, 9911, 9922, 9933, 9944, 9955, 9966, 9977, 9988<br>- | 2,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 20,000,000 ກີບ |
| 4 | ▪ ເລກຄູ່ຫາມກັນ<br>- 1001, 1221, 1331, 1441, 1551, 1661, 1771, 1881, 1991<br>- 2002, 2112, 2332, 2442, 2552, 2662, 2772, 2882, 2992<br>- 3003, 3113, 3223, 3443, 3553, 3663, 3773, 3883, 3993<br>- 4004, 4114, 4224, 4334, 4554, 4664, 4774, 4884, 4994<br>- 5005, 5115, 5225, 5335, 5445, 5665, 5775, 5885, 5995<br>- 6006, 6116, 6226, 6336, 6446, 6556, 6776, 6886, 6996<br>- 7007, 7117, 7227, 7337, 7447, 7557, 7667, 7887, 7997<br>- 8008, 8118, 8228, 8338, 8448, 8558, 8668, 8778, 8998<br>- 9009, 9119, 9229, 9339, 9449, 9559, 9669, 9779, 9889 | 1,600,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 16,000,000 ກີບ |
| 5 | ▪ ເລກຄູ່ສະຫຼັບກັນ<br>- 1010, 1212, 1313, 1414, 1515, 1616, 1717, 1818, 1919<br>- 2020, 2121, 2323, 2424, 2525, 2626, 2727, 2828, 2929<br>- 3030, 3131, 3232, 3434, 3535, 3636, 3737, 3838, 3939<br>- 4040, 4141, 4242, 4343, 4545, 4646, 4747, 4848, 4949<br>- 5050, 5151, 5252, 5353, 5454, 5656, 5757, 5858, 5959<br>- 6060, 6161, 6262, 6363, 6464, 6565, 6767, 6868, 6969<br>- 7070, 7171, 7272, 7373, 7474, 7575, 7676, 7878, 7979<br>- 8080, 8181, 8282, 8383, 8484, 8585, 8686, 8787, 8989<br>- 9090, 9191, 9292, 9393, 9494, 9595, 9696, 9797, 9898 | 1,600,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 16,000,000 ກີບ |
| 6 | ▪ ເລກສາມຕົວຫຼັງຄືກັນ<br>- 1222, 1333, 1444, 1555, 1666, 1555, 1888, 1999<br>- 2111, 2333, 2444, 2555, 2666, 2777, 2888, 2999<br>- 3111, 3222, 3444, 3555, 3666, 3777, 3888, 3999<br>- 4111, 4222, 4333, 4555, 4666, 4777, 4888, 4999<br>- 5111, 5222, 5333, 5444, 5666, 5777, 5888, 5999<br>- 6111, 6222, 6333, 6444, 6555, 6777, 6888, 6999 | 3,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 30,000,000 ກີບ |

| | | | |
|---|---|---|---|
| | - 7111, 7222, 7333, 7444, 7555, 7666, 7888, 7999<br>- 8111, 8222, 8333, 8444, 8555, 8666, 8777, 8999<br>- 9111, 9222, 9333, 9444, 9555, 9666, 9777, 9888 | | |
| 7 | ▪ ເລກຫຼັກພັນ<br>1000, 2000, 3000, 4000, 5000, 6000, 7000, 8000, 9000 | 2,000,000 ກີບ ຕໍ່ໜຶ່ງ ເລກປ້າຍທະບຽນ | 20,000,000 ກີບ |